165

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-------

ທະນາຄານ ແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ... ເລກທີ ...02/444... ວັນທີ..18 MAR 2016 ໂທລະສັບ 021 217770

ເລກທີ: 243/ຫກ

ນະຄອນຫຼວງວຽງຈັນ, ວັນທີ: 18 MAR 2016

**ແຈ້ງການ**

**ເຖິງ:** ທ່ານຫົວໜ້າກົມ - ທຽບເທົ່າ ແລະ ພະນັກງານພາຍໃນ ທຫລ.

**ເລື່ອງ:** ການນຳໃຊ້ອຸປະກອນໄຟຟ້າ ພາຍໃນກົມກອງຂອງທ່ານໃຫ້ເປັນລະບຽບຮຽບຮ້ອຍ ແລະ ມີຄວາມປອດໄພ.

- ອີງຕາມທິດຊີ້ນຳຂອງຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ລົງວັນທີ 04/03/2016;

ເພື່ອຄວາມປອດໄພຮອບດ້ານ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຈົບງາມຂອງສຳນັກງານ ທຫລ. ຫ້ອງການທະນາຄານແຫ່ງສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ກ່ຽວກັບການນຳໃຊ້ອຸປະກອນໄຟຟ້າຂອງທະນາຄານແຫ່ງ ສປປ ລາວ ເຊັ່ນ: ແອ, ກໍ້ປັກສຽບ, ກະຕິກນ້ຳຮ້ອນ, ຄອມພິວເຕີ, ໝໍ້ເກັບໄຟ, ຕູ້ເຢັນ, ດອກໄຟ ແລະ ອື່ນໆ. ເນື່ອງຈາກວ່າປັດຈຸບັນແມ່ນເຂົ້າສູ່ລະດູແລ້ງເຮັດໃຫ້ການກໍ່ເກີດອັກຄີໄພມີສູງ ແລະ ເກີດມີປະກົດການໄຟຟ້າລັດວົງຈອນເລື້ອຍໆ. ສະນັ້ນ, ເພື່ອເປັນການຕ້ານ ແລະ ສະກັດກັ້ນ ຕໍ່ບັນຫາດັ່ງກ່າວສະເໜີໃຫ້ທ່ານຊ່ວຍເປັນເຈົ້າການຕິດຕາມກວດກາການນຳໃຊ້ໄຟຟ້າ ແລະ ລະບົບໄຟຟ້າຢູ່ພາຍໃນກົມຂອງທ່ານໃຫ້ຢູ່ໃນສະພາບທີ່ປົກກະຕິ. ເພື່ອເປັນການປະຢັດໄຟຟ້າ, ຮັບປະກັນດ້ານຄວາມປອດໄພຢ່າງຮອບດ້ານ ແລະ ຫລີກລ້ຽງບັນຫາເກີດອັກຄີໄພກ່ອນຈະອອກຈາກຫ້ອງທຸກໆຄັ້ງ, ຄວນເອົາໃຈໃສ່ດັ່ງນີ້:

1. ຕ້ອງປິດໄຟ ແລະ ຖອດປັກສຽບ ເຄື່ອງໃຊ້ທີ່ບໍ່ຈຳເປັນທຸກໆຊະນິດເຊັ່ນ: ພັດລົມ, ໝໍ້ຕົ້ມນ້ຳຮ້ອນ, ໂທລະທັດ ແລະ ອື່ນໆ.
2. ປັບລະບົບຄວບຄຸມແອເຢັນ, ເຄື່ອງຟອກອາກາດ ໃຫ້ຢູ່ໃນລະດັບປະຢັດພະລັງງານທີ່ 24 – 25 ອົງສາ ແລະ ຄວນປິດແອກ່ອນອອກຈາກຫ້ອງປະມານ 15-20 ນາທີ.
3. ເປີດຜ້າກັ້ງປ່ອງຢ້ຽມເພື່ອຮັບແສງສະຫວ່າງຈາກທຳມະຊາດ ແທນການເປີດໄຟແສງສະຫວ່າງ ຫລຸດຜ່ອນການເປີດດອກໄຟທີ່ບໍ່ຈຳເປັນ.
4. ເວລາພັກຕອນທ່ຽງໃຫ້ພ້ອມກັນກວດກາມອດໄຟ ແລະ ປິດແອເຢັນໃຫ້ຮຽບຮ້ອຍ.
5. ຖ້າເຫັນລະບົບໄຟຟ້າຜິດປົກກະຕິໃຫ້ແຈ້ງຫ້ອງການ( ພະແນກບໍລິຫານ ) ແລະ ພາກສ່ວນກ່ຽວຂ້ອງເພື່ອພ້ອມກັນແກ້ໄຂໃຫ້ທັນເວລາ ແລະ ລະດົມພະນັກງານຂອງຕົນອອກຈາກຫ້ອງກ່ອນ ເວລາ 17:00 ໂມງ ເພື່ອໃຫ້ແມ່ບ້ານເຂົ້າທຳຄວາມສະອາດກວດກາຄວາມຮຽບຮ້ອຍ ແລະ ມອດໄຟ ( ຍົກເວັ້ນໃນກໍລະນີຈຳເປັນ ແລະ ຮີບດ່ວນ ຕ້ອງໄດ້ແຈ້ງໃຫ້ຫ້ອງການ ແລະ ຄະນະປ້ອງກັນຜູ້ທີ່ຮັບຜິດຊອບເຂດດັ່ງກ່າວຮັບຊາບ ). ເພື່ອຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສຳນັກງານອົງການໃຫ້ໄດ້ 100 %.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການນີ້ຢ່າງເຂັ້ມງວດ.

ຮອງແທນ **ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ**

ຫ້ອງການ

ອຸດຕະລາ ແກ້ວທາວົງ